ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 56 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 25 ທັນວາ 2017

ສຳນັກງານ ຄຄຊ
ລົງ ສາຍ
ເລກທີ 1411
ວັນທີ 27 DEC 2017
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 05-08/12/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,41% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາດີ ເປັນຕົ້ນແມ່ນຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຄັ້ງທຳອິດໃນອາທິດນີ້ຫຼຸດລົງເປັນ 236.000 ຄົນ ຈາກ 238.000 ຄົນໃນອາທິດຜ່ານມາ. ພ້ອມກັນນັ້ນ, ການປ່ຽນແປງຕົວເລກການຈ້າງງານບໍ່ລວມພາກສ່ວນກະສິກຳ ເພີ່ມຂຶ້ນ 228.000 ຄົນ ຂອງເດືອນ 11/2017 ໃນຂະນະທີ່ນັກວິເຄາະຄາດຄະເນວ່າຈະເພີ່ມຂຶ້ນພຽງແຕ່ 195.000 ຄົນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 27/11-01/12/2017 | ອາທິດນີ້ 04-08/12/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1902 | 1,1736 | 1,41% |
| ເຢນ/ໂດລາ | 112,42 | 113,54 | -0,99% |
| ບາດ/ໂດລາ | 32,60 | 32,65 | -0,15% |
| ເປໂຊ/ໂດລາ | 50,28 | 50,54 | -0,51% |
| ຣູເປັຍ/ໂດລາ | 13.524 | 13.545 | -0,16% |
| ໂດລາສິງກະໂປ/ໂດລາ | 1,3468 | 1,3533 | -0,48% |
| ຢວນ/ໂດລາ | 6,6075 | 6,6162 | -0,13% |

#### 1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 0,73% ຈາກ 57,31 ໂດລາ/ບາເຣວ ມາເປັນ 56,89 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດອາເມລິກາ ເພີ່ມຂຶ້ນ 6,78 ລ້ານບາເຣວ ຂອງອາທິດທີ 01/12/2017 ຈາກເພີ່ມຂຶ້ນ 3,63 ລ້ານບາເຣວ ໃນອາທິດຜ່ານມາ;

- ສຳລັບລາຄາຄຳ ຫຼຸດລົງ 2,43% ຈາກ 1.277,01 ໂດລາ/ອອນ ມາເປັນ 1.245,98 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ແລ້ວປ່ຽນມາຖືຄອງເງິນໂດລາແທນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,003% ແລະ ອ່ອນຄ່າລົງ 0,03% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າ 0,22% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,38% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 27/11-01/12/2017 | | | ອາທິດນີ້ 04-08/12/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.307,56 | 8.327,50 | 8.316,99 | 8.305,05 | 8.332,98 | 8.317,23 | 0,03% | -0,07% | -0,003% | 0,14% | 0,26% | 0,22% |
| ບາດ | 255,03 | 256,58 | 255,97 | 255,01 | 256,63 | 256,04 | 0,01% | -0,02% | -0,03% | -8,40% | -8,39% | -8,38% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນM2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 0,12% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,59%;
- ປະລິມານເງິນ M2 ຫຼຸດລົງ 0,67% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 14,72%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທີ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (01-07/12/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 12,28 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 28,96 ລ້ານໂດລາ ແລະ ຂາຍໂດລາໄດ້ 16,68 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 216,70 ລ້ານບາດ (ໃນນີ້ຊື້ບາດໄດ້ 139,01 ລ້ານບາດ ແລະ ຂາຍບາດໄດ້ 355,71 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາ ຫຼຸດລົງ 19,11% ແລະ ເງິນບາດ ຫຼຸດລົງ 37,05%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈຳນວນ 2,00 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 0,72 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 30,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ ເຫັນວ່າບໍ່ມີການຊື້-ຂາຍ.

---

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 24-30/11/2017 | | ອາທິດນີ້ 01-07/12/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **32,08** | **221,17** | **28,96** | **139,01** | **-9,73%** | **37,15%** |
| - ທ/ຄ ທຸລະກິດລັດ | 14,14 | 92,71 | 11,41 | 47,80 | -19,31% | -48,44% |
| - ທ/ຄ ທຸລະກິດອື່ນໆ | 17,94 | 128,46 | 17,55 | 91,21 | -2,17% | -29,00% |
| **2. ການຂາຍເງິນຕາຕ່າງປະເທດ** | **24,34** | **564,77** | **16,68** | **355,71** | **-31,47%** | **-37,02%** |
| - ທ/ຄ ທຸລະກິດລັດ | 13,01 | 128,01 | 7,76 | 80,92 | -40,35% | -36,79% |
| - ທ/ຄ ທຸລະກິດອື່ນໆ | 11,33 | 436,76 | 8,92 | 274,79 | -21,27% | -37,08% |
| **ຊື້-ຂາຍສຸດທິ ທທກ** | **7,74** | **-343,60** | **12,28** | **-216,70** | **58,66%** | **-36,93%** |
| - ຜິດດ່ຽງຊື້-ຂາຍ | 24,13% | -155,36% | 42,40% | -155,89% | 75,71% | 0,34% |
| **- ມູນຄ່າການຊື້-ຂາຍ** | **56,42** | **785,94** | **45,64** | **494,72** | **-19,11%** | **-37,05%** |
| **3.ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ** | **-16,64** | **0,00** | **-2,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 16,64 | 0,00 | 2,00 | 0,00 | | |
| **4.ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ** | **1,46** | **12,00** | **0,72** | **30,00** | | |
| **5.ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 12/2017 ຄາດວ່າຈະຢູ່ໃນລະດັບ 0,33% (ຕົວເລກຄາດຄະເນ).

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ ຫຼຸດລົງ 75,2% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 9,8 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 44,3% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 45,45 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 702 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 232 ສະບັບ ເທົ່າກັບ 24,83% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 233,23 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 168,64 ຕື້ກີບ ເທົ່າກັບ 41,96% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/12/2017) ມີທັງໝົດ 3.012 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 3.012 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 322,38 ຕື້ກີບ ຈາກ 747,38 ຕື້ກີບ ມາເປັນ 425 ຕື້ກີບ ເທົ່າກັບ 43,13%;
- ສຳລັບກະຊວງການເງິນ ແມ່ນບໍ່ມີການເຄື່ອນໄຫວ.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 1.014,14 ຈຸດ ຫຼຸດລົງ 1,44% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 178.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 893,30 ລ້ານກວ່າກີບ ເພີ່ມຂຶ້ນ 33,31% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 42,29% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 27/11-01/12/2017 | ດັດຊະນີອາທິດທີ 04-08/12/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.028,92 | 1.014,14 | -1,44 | |

<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)</u> (ຫົວໜ່ວຍມູນຄ່າ 1.000ກີບ)

| ລາຍຊື່ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 77.500 | 424.825.000 | 5.482 | **61.400** | **336.590.000** | **5.482** | -20,77 | -20,77 | 0 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 49.200 | 240.635.000 | 4.891 | **114.400** | **551.170.000** | **4.818** | 132,52 | 129,05 | -73 |
| ບໍລິສັດລາວເວີນມະຫາຊົນ | 100 | 630.000 | 6.300 | **100** | **460.000** | **4.600** | - | -26,98 | -1.700 |
| ບໍລິສັດປີໂຕລ້ຽມເທຣດດິ້ງລາວມະຫາຊົນ | - | - | 2.200 | **-** | **-** | **2.200** | - | - | - |
| ບໍລິສັດສູອັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | **-** | **-** | **2.950** | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 2.200 | 3.980.000 | 1.809 | **2.900** | **5.080.000** | **1.752** | 31,82 | 27,64 | -57 |
| ທັງໝົດ | 129.000 | 670.070.000 | | **178.800** | **893.300.000** | | 38,60 | 33,31 | |

3. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພະຈິກ 2017 ທີ່ (ຫສນຍ); ❷ ກອງປະຊຸມສ່ອງແສງສາຍພັກ ແລະ ສາຍລັດ ປະຈຳເດືອນ ພະຈິກ 2017 ທີ່ (ທຫລ); ❸ ກອງປະຊຸມປຶກສາຫາລືວຽກອ່າຍໜີ້ສາມແຈ ທີ່ (ທຫລ); ❹ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ ແລະ ❺ ກອງປະຊຸມສຳມະນາວຽກງານບາເຊວ ຮ່ວມກັບທະນາຄານແຫ່ງລັດຫວຽດນາມ ແລະ ບໍລິສັດເອີນແອນຢັງ ສສ ຫວຽດນາມ;
- ສຳເລັດການຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທຫລ ແລະ ທະນາຄານກາງ ສ.ເກົາຫຼີ ຢູ່ແຂວງຫຼວງພະບາງ;

- ທ່ານ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະສໍາເລັດໃນການເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການ ຢູ່ຕ່າງແຂວງ;

- ທ່ານ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະສໍາເລັດໃນການເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງບໍລິຄໍາໄຊ ແລະ ແຂວງວຽງຈັນ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທີ່ວລະບົບ.

- **ກະກຽມຈັດກອງປະຊຸມ ແລະ ສໍາມະນາຕ່າງໆ:** ❶ ກອງປະຊຸມຄະນະກໍາມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປະຈໍາປີ 2017 ທີ່ (ທຫລ); ❷ ກອງປະຊຸມປະຊາສຶກສາທາງດ້ານການເງິນ ທີ່ (ທຫລ); ❸ ກອງປະຊຸມຜົນການປຶກສາຫາລືກັບກອງທຶນການເງິນສາກົນ ທີ່ (ທຫລ); ❹ ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍສິນທີສັນຍາ ແລະ ສັນຍາສາກົນ ທີ່ (ສູນ ITCT ຫຼັກ 5) ແລະ ❺ ສໍາມະນາລະບົບຊໍາລະ ກັບບໍລິສັດ ທີ່ (ໂຮງແຮມ ລາວພຣາຊາ);

- **ກະກຽມເຂົ້າຮ່ວມກອງປະຊຸມ:** ທ່ານ ຮອງຜູ້ວ່າການ ທຫລ ກະກຽມເດີນທາງເຂົ້າຮ່ວມກອງປະຊຸມລະດັບຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການ ທຫລ ອາຊຽນ +3 ທີ່ (ປະເທດຍີ່ປຸ່ນ);

- ທ່ານ ຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງຈໍາປາສັກ, ເຊກອງ, ສາລະວັນ ແລະ ອັດຕະປື;

- ທ່ານ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກທາງລັດຖະການ ຢູ່ແຂວງຜົ້ງສາລີ, ອຸດົມໄຊ, ບໍ່ແກ້ວ ແລະ ຫຼວງນໍ້າທາ;

- ກະກຽມຕ້ອນຮັບແຂກເຂົ້າຢ້ຽມຂໍ່ານັບ ທ່ານ ຜູ້ວ່າການ ທຫລ ຂອງທ່ານ ນ. Edna Villa, ຮອງຫົວໜ້າກຸ່ມ SEAVG ແລະ ຄະນະປະເມີນຜົນເສດຖະກິດມະຫາພາກຕາມມາດຕາ IV ຂອງກອງທຶນການເງິນສາກົນ.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ